ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ເລກທີ 188 /ກປຈ

ນະຄອນຫຼວງວຽງຈັນ, ວັນທີ 24 ກຸມພາ 2026

## ໜັງສືແຈ້ງເຊີນປະມູນ

1. ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ໃນນາມຕາງໜ້າຄະນະຮັບຜິດຊອບຈັດຊື້ພາຫະນະ ຂໍເຊີນ ບັນດາບໍລິສັດທີ່ມີຄຸນນະວຸດທິເໝາະສົມ ສົນໃຈເຂົ້າຍື່ນຊອງປະມູນ ສໍາລັບການສະໜອງພາຫະນະ ປະເພດລົດໃຫຍ່ຕາມການຢັ້ງຢືນຂອງກົມແຜນການ ແລະ ການເງິນ ກະຊວງເຕັກໂນໂລຊີ ແລະ ການ ສື່ສານ ຈໍານວນທັງໝົດ 02 ຄັນ ປະກອບມີ: ປະເພດລົດຈີບ ເກຍໂອໂຕ ຈໍານວນ 01 ຄັນ ແລະ ລົດ ກະບະ ເກຍໂອໂຕ ຈໍານວນ 01 ຄັນ. ເພື່ອປະກອບເປັນລົດຮັບໃຊ້ວຽກງານບໍລິຫານຂອງກະຊວງ ເຕັກໂນໂລຊີ ແລະ ການສື່ສານ. ກໍານົດເວລາມອບ-ຮັບລົດພາຍໃນ 30 ວັນ.
2. ການປະມູນຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງທີ່ໄດ້ກໍານົດໄວ້ຢູ່ກົດໝາຍວ່າດ້ວຍການ ຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄໍາ ແນະນໍາກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບ ເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນໃນຄັ້ງນີ້ ອະນຸຍາດໃຫ້ທຸກໆບໍລິສັດທີ່ມີຄຸນນະວຸດທິເໝາະສົມສົນໃຈເຂົ້າຮ່ວມແຂ່ງຂັນ ການປະມູນ. ສາມາດຕິດຕໍ່ພົວພັນເອກະສານປະມູນໄດ້ທີ່ ກົມປະເມີນຜົນ ແລະ ການຈັດຊື້-ຈັດຈ້າງ ກະຊວງການເງິນ ຊັ້ນ 4 (ຕຶກແຄມຂອງ) ເບີໂທຕິດຕໍ່ 02028999891, 020 22042440 ໃນ ເວລາລັດຖະການ.
4. ເອກະສານປະມູນເລີ່ມຂາຍແຕ່ 24 ກຸມພາ 2026 ຫາ 30 ມີນາ 2026. ໃນລາຄາ 5,000,000 ກີບ/ຊອງ, ວິທີການຊໍາລະເປັນເງິນສົດ, ຈໍານວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ.
5. ຊອງປະມູນຕ້ອງສົ່ງກ່ອນເວລາ 14:00 ໂມງ ຂອງວັນທີ 30 ມີນາ 2026. ຊອງປະມູນທຸກໆຊອງຈະ ໄດ້ເປີດໃນວັນທີ 30 ມີນາ 2026 ເວລາ 14:00ໂມງ ທີ່ຫ້ອງປະຊຸມກົມປະເມີນຜົນ ແລະ ການຈັດ ຊື້-ຈັດຈ້າງ ກະຊວງການເງິນ ຊັ້ນ4 ( ຕຶກແຄມຂອງ ) ໂດຍຊອງໜ້າຄະນະກໍາມະການປະມູນ ແລະ ຕົວແທນຜູ້ປະມູນທີ່ສົນໃຈເຂົ້າຮ່ວມ. ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກໍານົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດ.
6. ທຸກຊອງປະມູນຕ້ອງມີໜັງສືຄໍ້າປະກັນການປະມູນຈາກທະນາຄານ, ແຊັກ (VISA) ຫຼື ເງິນສົດ ຊຶ່ງມີ ມູນຄ່າຂອງການຄໍ້າປະກັນບໍ່ໃຫ້ຫຼຸດ 2 %ຂອງມູນຄ່າທີ່ສະເໜີປະມູນ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນການຈັດຊື້ດັ່ງກ່າວຕາມທາງຄວນດ້ວຍ.

ຫົວໜ້າກົມ

ສົມບູນ ແກ່ນປະເສີດ

Somboun KENPASEUTH

สแกนด้วย CamScanner